ສດຈ. ດຣ. ບໍ່ແສງຄໍາ ວົງດາລາ, ບົວແກ້ວ ຈະເລີນລັງສີ
ສຸກສະຫວ່າງ ສີມານະ, ວິຊຽນ ຖະຫວິນເຊື້ອ,
ໄນ ມະນີວັນ, ມີທອງ ສຸວັນວິໄຊ


# ວັນນະຄະດີລາວ



NHÀ XUẤT BẢN GIÁO DỤC VIỆT NAM

ສດຈ. ດຣ. ບໍ່ແສງຄຳ ວົງດາລາ, ບົວແກ້ວ ຈະເລີນວົງສີ
ສຸກສະຫວ່າງ ສິມານະ, ວິຊຽນ ຖະຫວິນເຊື້ອ,
ໄມ ມະນີວັນ, ມີທອງ ສຸວັນວິໄຊ

# ວັນນະຄະດີລາວ

NHÀ XUẤT BẢN GIÁO DỤC VIỆT NAM

# ວັນນະຄະດີລາວ

ກະຊວງສຶກສາ

# ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ

ຄົ້ນຄວ້າ ແລະ ຮຽບຮຽງ

ໂດຍ:

ສດຈ. ດຣ. ບໍ່ແສງຄຳ ວົງດາລາ, ບົວແກ້ວ ຈະເລີນລັງສີ

ສຸກສະຫວາງ ສີມານະ, ວິຊຽນ ຖະຫວິນເຊື້ອ,

ໄມ ມະນີວັນ, ມີທອງ ສຸວັນວິໄຊ

* ຄະນະຈັດທຳ

- ວິວັນ ຈັນທະໂຄດ ຫົວໜ້າອຳນວຍການ - ບັນນາທິການໃຫຍ່
- ພິມມີ ມຸນຕີ ຮອງອຳນວຍການ - ຮອງບັນນາທິການໃຫຍ່
- ສີສະຫວາດ ຣາຊາສັກດ໌ ຫົວໜ້າບັນນາທິການ
- ບຸນໄຊ ວົງຈັນດີ ຮອງບັນນາທິການ
- ອຳພາ ອຸດທະຈັກ ຮອງບັນນາທິການ

* ຄອມພິວເຕີ ແລະ ຈັດໜ້າ

- ອຳພາ ອຸດທະຈັກ
- ດວງຈັນ ຊຸນລະລິກ

* ເນື້ອໃນ

ສດຈ. ດຣ. ບໍ່ແສງຄຳ ວົງດາລາ, ບົວແກ້ວ ຈະເລີນລັງສີ
ສຸກສະຫວ່າງ ສີມານະ, ວິຊຽນ ຖະຫວິນເຊື້ອ,
ໄມ ມະນີວັນ, ມີທອງ ສຸວັນວິໄຊ

* ພິມທີ່ໂຮງພິມ ສຳນັກພິມສຶກສາຫວຽດນາມ

- ຈຳນວນ 1,000 ຫົວ
- ຂະໜາດ 15 x 21 ຊ.ມ

---

119-2009/CXB/72-160/GD    Mã số: 8N638T9 - CDT

# ຄຳຂອບໃຈ

ເພື່ອສົ່ງເສີມ ແລະ ປັບປຸງໃຫ້ວັນນະກຳພື້ນເມືອງລາວ ກໍຄື ວັນນະຄະດີຍຸກສະໄໝຂອງລາວໃຫ້ນັບມື້ນັບເຕີບໃຫຍ່ຂະຫຍາຍຕົວ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳແຫ່ງ ສ. ປ. ປ. ລາວ ໄດ້ມອບໝາຍໃຫ້ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດທຳການປະລິວັດ ແລະ ທ້ອນໂຮມເອົາບັນດາວັນນະກຳຍຸກສະໄໝເພື່ອພິມ ແລະ ຈຳໜ່າຍຮ່ວມຢູ່ໃນປຶ້ມກ່ຽວກັບ " ວັນນະຄະດີລາວ " ຊຶ່ງຂຽນ ແລະ ຮຽງໂດຍທ່ານ ດຣ. ບໍ່ແສງຄຳ ວົງດາລາ.

ແຕ່ເນື່ອງຈາກວ່າ ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ຂາດງົບປະມານດ້ານການພິມ, ເພາະສະນັ້ນ ພວກຂ້າເຈົ້າຈຶ່ງຂໍຄວາມຊ່ວຍເຫລືອຈາກສຳນັກພິມສຶກສາ ສ.ສ. ຫວຽດນາມ ຊ່ວຍເຫລືອພິມໃຫ້. ຝ່າຍສຳນັກພິມສຶກສາຫວຽດນາມຍິນດີຕອບຄຳຮ້ອງຂໍຂອງສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດຂອງລາວ.

ນະໂອກາດນີ້, ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ສ. ປ.ປ. ລາວ ຂໍສະແດງຄວາມຂອບອົກຂອບໃຈມາຍັງສຳນັກພິມສຶກສາທິການແຫ່ງ ສ. ສ. ຫວຽດນາມ ຢ່າງສຸດອົກສຸດໃຈ ທີ່ພວກທ່ານໄດ້ປະ ກອບສ່ວນໃຫ້ແກ່ຄັງສາງດ້ານປຶ້ມວັນນະກຳຂອງລາວ. ຂໍອວຍໄຊໃຫ້ພອນແດ່ຄະນະນຳຂອງສຳນັກພິມສຶກສາຕະຫລອດຮອດພະນັກງານ, ກຳມະ ກອນ ຈົ່ງມີສຸຂະພາບແຂງແຮງ, ມີຄວາມສຸກ, ປະສົບຜົນສຳເລັດໃນໜ້າທີ່ການງານ. ອວຍໄຊມິດຕະພາບ ລາວ - ຫວຽດນາມ ໝັ້ນຍືນ.

ວຽງຈັນ, ວັນທີ.18. / ກໍລະກົດ. 2008

ຜູ້ອຳນວຍການ ແລະ ບັນນາທິການໃຫຍ່

ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ.

ວິວັນ ຈັນທະໂຄດ

# LỜI CẢM ƠN

Để quảng bá và giúp cho văn học dân gian cũng như văn học hiện đại của Lào ngày càng phát triển, hoàn thiện, Bộ Thông tin và Văn hoá nước Cộng hoà Dân chủ Nhân dân Lào đã giao cho Nhà xuất bản và Phát hành sách Quốc gia Lào nghiên cứu và sưu tầm văn học dân gian, văn học thời đại để xuất bản cuốn sách *Văn học Lào* do Tiến sĩ Bò Xẻng Khăm Vôngđala làm Chủ biên.

Nhà xuất bản và Phát hành sách Quốc gia Lào đề nghị Nhà xuất bản Giáo dục Việt Nam in giúp cuốn sách này, Nhà xuất bản Giáo dục Việt Nam đã vui lòng đáp ứng lời đề nghị trên.

Nhân dịp này, Nhà xuất bản và Phát hành sách Quốc gia nước Cộng hoà Dân chủ Nhân dân Lào xin bày tỏ lời cảm ơn nồng nhiệt và chân thành tới Nhà xuất bản Giáo dục nước Cộng hoà Xã hội Chủ nghĩa Việt Nam đã hỗ trợ kinh phí để in cuốn sách *Văn học Lào*. Xin cảm ơn và kính chúc Ban Tổng Giám đốc, các cán bộ công nhân viên của Nhà xuất bản Giáo dục Việt Nam dồi dào sức khoẻ, hạnh phúc và đạt nhiều thành tựu trong công tác. Xin chúc tình hữu nghị Lào - Việt đời đời bền vững.

*Viêng Chăn, ngày 18 tháng 11 năm 2008*

**Tổng Giám đốc - Tổng biên tập**

**Nhà xuất bản và Phát hành sách Quốc gia Lào**

**Vivăn CHĂN THA KHỐT**

*(Đã kí)*

# ຄໍານໍາ

ວັນນະຄະດີເປັນພາກສ່ວນໜຶ່ງທີ່ສໍາຄັນ ແລະ ລໍ້າຄ່າແຫ່ງມູນມັງມໍລະດົກວັດທະນະທໍາ ອັນປະເສີດ ແລະ ເກົ່າແກ່ບູຮານຂອງຊາດລາວເຮົາ, ໂດຍໄດ້ກາຍເປັນຄັງສາງ ອັນອຸດົມຮັ່ງມີໄປດ້ວຍບົດວັນນະຄະດີທີ່ດີເດັ່ນ ແຫ່ງວັນະຄະດີພື້ນເມືອງ ແລະ ວັນນະຄະດີຂຽນສະໄໝຕ່າງໆ ຊຶ່ງກໍາເນີດ ແລະ ຂະຫຍາຍຕົວມາເປັນເວລາຕັ້ງຫລາຍສະຕະວັດແລ້ວ.

ແຕ່ໜ້າເສຍດາຍທີ່ວັນນະຄະດີແຫ່ງຊາດອັນອຸດົມສົມບູນດັ່ງກ່າວ ນັ້ນໃນເວລາຜ່ານມາບໍ່ໄດ້ຮັບການເອົາໃຈໃສ່ຖະນຸຖະໜອມ, ທ້ອນໂຮມ, ຄົ້ນຄວ້າສຶກສາ ແລະ ນໍາມາເຜີຍແຜ່ສົ່ງເສີມເທົ່າທີ່ຄວນ, ຊໍ້າບໍ່ໜໍາຍັງຖືກ ປ່ອຍປະໃຫ້ຕົກເຮ່ຍເສຍຫາຍໄປເປັນຈໍານວນບໍ່ໜ້ອຍ ໂດຍສະເພາະຢ່າງ ຍິ່ງແມ່ນໃນໄລຍະເວລາທີ່ພວກສັກດີນາໄທສະຫຍາມ, ພວກລ່າເມືອງຂຶ້ນ ຝຣັ່ງ ແລະ ຈັກກະພັດ ອາເມລິກາໄດ້ປຸ້ນກັນເຂົ້າມາຮຸກຮານ ແລະ ຍຶດ ຄອງປະເທດລາວເຮົາຢູ່ນັ້ນ.

ຕໍ່ໜ້າສະພາບການດັ່ງກ່າວນີ້, ໂດຍເຫັນແຈ້ງຄຸນຄ່າອັນເລີດລໍ້າ ແລະ ບົດບາດອັນສໍາຄັນຍິ່ງຂອງວັນນະຄະດີແຫ່ງຊາດລາວເຮົາ, ພັກປະ ຊາຊົນປະຕິວັດລາວຈິ່ງໄດ້ເອົາໃຈໃສ່ຢ່າງເປັນປະຈໍາຕໍ່ການຟື້ນຟູ, ຄົ້ນ ຄວ້າສຶກສາ ແລະ ສືບຕໍ່ປະດິດຄິດແຕ່ງວັນນະຄະດີຕາມແນວທາງອັນຖືກ ຕ້ອງສອງໃສຂອງພັກ. ໂດຍສະເພາະຢ່າງຍິ່ງນັບແຕ່ການສະຖາປະນາປະ ເທດເຮົາເປັນປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຕົ້ນມາພັກ ແລະ ລັດຍິ່ງເອົາໃຈໃສ່ເປັນພິເສດຕໍ່ວຽກງານອັນສໍາຄັນ ແລະ ຮີບດ່ວນນີ້. ພາຍໃຕ້ການນໍາພາຂອງພັກ, ໂດຍປະຕິບັດຕາມພາລະ

ບົດບາດທີ່ສະພາລັດຖະມົນຕີກຳນົດໄວ້, ໃນຫລາຍປີຜ່ານມານີ້ ກະຊວງສຶກສາໄດ້ຕັ້ງໜ້າສຸມທຸກກຳລັງໃສ່ວຽກງານການຄົ້ນຄວ້າຮຽບຮຽງປຶ້ມຫລັກສູດຕ່າງໆ, ໃນນັ້ນມີທັງປຶ້ມວັນນະຄະດີລາວສຳລັບຊັ້ນປະຖົມ, ມັດທະຍົມ ແລະ ອຸດົມສຶກສາ ຕະຫລອດເຖິງຂັ້ນມະຫາວິທະຍາໄລ.

ການກ້າວເຂົ້າມາໃນຕົ້ນຊຸມປີແປດສິບນີ້, ໂດຍປະຕິບັດຕາມມະຕິຕົກລົງຂອງສູນກາງພັກ, ກະຊວງສຶກສາໄດ້ແຕ່ງຕັ້ງຄະນະກຳມະການຄົ້ນຄວ້າຮຽບຮຽງປຶ້ມວິທະຍາສາດ - ສັງຄົມຂຶ້ນ ໃນຂອບເຂດຂອງກະຊວງສຶກສາເອງ ອັນມີທ່ານ ບຸນຕຽມ ພິດສະໄໝ ຜູ້ວ່າການລັດຖະມົນຕີກະຊວງສຶກສາເປັນປະທານ. ຄະນະດັ່ງກ່າວນີ້ປະກອບດ້ວຍອະນຸກຳມະການປະຫວັດສາດລາວ, ອະນຸກຳມະການພູມສາດລາວ ແລະ ອະນຸກຳມະການວັນນະຄະດີລາວ.

ຜ່ານການປະຕິບັດວຽກງານຕົວຈິງມາໄລຍະໜຶ່ງ, ຄະນະກຳມະການຂຽນປຶ້ມດັ່ງກ່າວນີ້ໄດ້ເຕີບໃຫຍ່ຂະຫຍາຍຕົວຂຶ້ນທັງໃນດ້ານປະລິມານ ແລະ ຄຸນນະພາບ. ບົນພື້ນຖານຄະນະກຳມະການນີ້ເອງ, ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານການຄົ້ນຄວ້າວິທະຍາສາດສັງຄົມໃນໄລຍະໃໝ່, ກະວງສຶກສາຈຶ່ງໄດ້ສ້າງຕັ້ງສະຖາບັນຄົ້ນຄວ້າ ວິທະຍາສາດ - ສັງຄົມຂຶ້ນຕາມການອະນຸມັດຂອງສະພາລັດຖະມົນຕີ. ໃນ ດ້ານວັນນະຄະດີ, ພະແນກວັນນະຄະດີພາສາສາດຂອງສະຖາບັນໄດ້ຮັບພາລະສືບທອດໜ້າທີ່ວຽກງານຂອງອະນຸກຳມະການວັນນະຄະດີໃນເມື່ອກ່ອນ ຄືກ່ອນອື່ນໝົດແມ່ນສືບຕໍ່ຄົ້ນຄວ້າຮຽບຮຽງປຶ້ມ " ວັນນະຄະດີ ລາວ" ໃຫ້ສຳເລັດໃນໄລຍະເວລາອັນຮີບດ່ວນເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ອັນນັບມື້ນັບຫລາຍຂຶ້ນ ໃນການຄົ້ນຄວ້າວັນນະຄະດີ ລາວ

ຢູ່ຕາມມະຫາວິທະຍາໄລ ແລະ ໂຮງຮຽນຕ່າງໆ, ເພື່ອຮັບໃຊ້ການເຜີຍແຜ່ວັນນະຄະດີອັນອຸດົມຮັ່ງມີຂອງຊາດລາວເຮົາຕໍ່ພາຍໃນ ແລະ ຕ່າງປະເທດ. ພ້ອມກັນນັ້ນປຶ້ມ " ວັນນະຄະດີລາວ " ເຫລັ້ມນີ້ຍັງຊ່ວຍຊີ້ຊ່ອງທາງໃຫ້ແກ່ການປະດິດແຕ່ງວັນນະຄະດີຕາມແບບແຜນຂອງລັດທິສັດຈະທັດສັງຄົມນິຍົມອີກດ້ວຍ.

ເພື່ອເຮັດໃຫ້ຫລ້ອນໜ້າທີ່ອັນສຳຄັນ ແລະ ມີກຽດດັ່ງກ່າວມານັ້ນ ບັນດາຜູ້ແຕ່ງປຶ້ມເຫລັ້ມນີ້ໄດ້ນຳໃຊ້ເອກະສານຕ່າງໆກ່ຽວກັບວັນນະຄະດີລາວທີ່ຊອກຫາມາໄດ້ທັງຢູ່ພາຍໃນ ແລະ ຕ່າງປະເທດ, ໄດ້ເອົາໃຈໃສ່ຫາບທາມຄຳເຫັນຂອງບັນດານັກຄົ້ນຄວ້າວັນນະຄະດີລາວທັງຫລາຍໂດຍຍຶດໝັ້ນຢູ່ບົນຫລັກການຂອງທິດສະດີວັນນະຄະດີແບບມາກ - ເລນິນສົມທົບກັບລັກສະນະພິເສດຂອງວັນນະຄະດີແຫ່ງຊາດລາວເຮົາພາຍໃຕ້ແສງສະຫວ່າງຂອງມະຕິຕ່າງໆ ກ່ຽວກັບວຽກງານດ້ານແນວຄິດວັດທະນະທຳທີ່ສູນກາງພັກປະຊາຊົນປະຕິວັດລາວໄດ້ວາງໄວ້.

ການຄົ້ນຄວ້າ, ຮຽບຮຽງປຶ້ມ " ວັນນະຄະດີລາວ " ເຫລັ້ມນີ້ໄດ້ຮັບຄວາມສະດວກອັນເປັນພື້ນຖານຫລາຍຢ່າງທີ່ຊ່ວຍໃຫ້ບັນດາຜູ້ແຕ່ງສາມາດ ດຳເນີນວຽກງານມາຈົນສຳເລັດຜົນຢ່າງຮຽບຮ້ອຍ ແລະ ທັນເວລາ. ກ່ອນອື່ນໝົດແມ່ນວຽກງານອັນສຳຄັນຄັ້ງນີ້ໄດ້ຮັບຄວາມເອົາໃຈໃສ່ເປັນພິເສດ ຈາກພັກ ແລະ ລັດ ອັນສະແດງອອກໃນການຊີ້ນຳຢ່າງໃກ້ຊິດຕິດແທດເປັນ ປະຈຳຂອງ ທ່ານ ພູມີ ວົງວິຈິດ ກຳມະການກົມການເມືອງສູນກາງພັກ, ຜູ້ວ່າການແທນປະທານປະເທດ, ຮອງປະທານສະພາລັດຖະມົນຕີແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ນອກນັ້ນ ບັນດາຜູ້ແຕ່ງ ຍັງໄດ້ຮັບການຊ່ວຍເຫລືອ ແລະ ຮ່ວມມືຢ່າງສຸດອົກສຸດໃຈຈາກສຳ

ນັກ ງານອົງການຕ່າງໆຂອງ ພັກ ແລະ ລັດ ເຊັ່ນ: ຫ້ອງວ່າການສະພາລັດຖະມົນຕີ, ຄະນະກຳມະການບັນດາເຜົ່າ, ຄະນະກຳມະການຄົ້ນຄວ້າ, ຮຽບຮຽງ ແລະ ແປທິດສະ ດີມາກ - ເລນິນ, ສະຖາບັນຄົ້ນຄວ້າສີລະປະວັນນະຄະດີພື້ນເມືອງ, ສຳນັກພິມ ແລະ ຈຳໜ່າຍປຶ້ມຂອງກະຊວງວັດທະນະທຳ, ຫໍສະໝຸດແຫ່ງຊາດ, ຄະນະກຳມະການການຄົ້ນຄ້ວາວິທະຍາສາດການສຶກສາ ແລະ ຮຽບຮຽງ ( ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ), ມະຫາວິທະຍາໄລ ສ້າງຄູວຽງຈັນ, ຄະນະບັນນາທິການໜັງສືພິມ " ປະຊາຊົນ " " ວັນນະສິນ", " ສຶກສາໃໝ ", ແລະ ອື່ນໆ... ພ້ອມທັງບຸກຄົນຕ່າງໆຫລາຍທ່ານທີ່ມີຄວາມ ຮູ້ ແລະ ບົດຮຽນໃນການຄົ້ນຄວ້າ ແລະ ປະດິດແຕ່ງວັນນະຄະດີລາວເຊັ່ນ: ທ່ານ ມະຫາຄຳພັນ ວິລະຈິດ, ທ່ານ ໂສມສີ ເດຊາຄຳພູ, ທ່ານ ມະຫາ ສີ ລາ ວິລະວົງ, ທ່ານ ພູວົງ ພິມມະສອນ, ທ່ານ ສຸວັນທອນ ບຸບຜານຸວົງ ແລະ ທ່ານ ອື່ນໆ ... ໃນໂອກາດນີ້ ສະຖາບັນຄົ້ນຄວ້າວິທະຍາສາດ - ສັງຄົມ ຈຶ່ງຂໍສະ ແດງ ຄວາມຮູ້ບຸນຄຸນ ແລະ ຄວາມຂອບອົກຂອບໃຈຢ່າງຫລົ້ນເຫລືອຕໍ່ສຳ ນັກງານ, ອົງການ ແລະ ທ່ານທັງຫລາຍທີ່ໄດ້ກ່າວມານັ້ນດ້ວຍ.

ພິເສດ ໃນການຄົ້ນຄວ້າຮຽບຮຽງປຶ້ມ " ວັນນະຄະດີ " ຄັ້ງທຳອິດອັນເປັນ ປະຫວັດສາດທີ່ສຳຄັນຍິ່ງນີ້, ບັນດານັກຄົ້ນຄວ້າລາວເຮົາຍັງໄດ້ຮັບຄວາມຮ່ວມມືປະສານງານຢ່າງຈິງໃຈ ແລະ ມີປະສິດທິພາບຈາກຄະນະກຳມະການວິທະຍາສາດສັງຄົມ ແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ທີ່ໄດ້ຈັດສົ່ງບັນດາຊ່ຽວຊານ ຜູ້ມີບົດຮຽນມາຊ່ວຍປະກອບຄຳຄິດ ຄຳເຫັນອັນໄດ້ກາຍເປັນປັດໄຈສຳຄັນຍິ່ງອັນໜຶ່ງ ຊຶ່ງປະກອບສ່ວນສ້າງຄວາມສຳເລັດ ໃນການຂຽນປຶ້ມເຫລັ້ມນີ້, ພ້ອມກັນນັ້ນ ກໍຍັງເປັນການສໍ່ສະແດງໃຫ້ເຫັນອີກເທື່ອໜຶ່ງ ເຖິງພາກພົນອັນງອກງາມຂອງສາຍສຳພັນ

ຮ່ວມມື ແລະ ຄວາມສາມັກຄີແບບພິເສດລະຫວ່າງບັນດານັກຄົ້ນຄວ້າວິທະຍາສາດ ກໍຄືປະຊາຊົນສອງຊາດ ລາວ -ຫວຽດນາມ ອ້າຍນ້ອງ. ສະຖາບັນ ຄົ້ນຄວ້າວິທະຍາສາດ - ສັງຄົມ ຈຶ່ງຂໍສະແດງຄວາມຮູ້ບຸນຄຸນ ແລະ ຄວາມ ຂອບໃຈຢ່າງຈິງໃຈ, ເລິກເຊິ່ງຕໍ່ຄະນະກຳມະການວິທະຍາສາດສັງຄົມ ຫວຽດນາມ ຕະຫລອດເຖິງພວກນັກຊ່ຽວຊານ ຫວຽດນາມ ອ້າຍນ້ອງ ທຸກທ່ານທີ່ໄດ້ໃຫ້ການຮ່ວມມືອັນລ້ຳຄ່າໃນການຄົ້ນຄວ້າຂຽນປຶ້ມເຫລັ້ມນີ້.

ນອກຈາກ ຂໍ້ສະດວກອັນເປັນພື້ນຖານດັ່ງກ່າວມາແລ້ວນັ້ນ, ການຄົ້ນຄວ້າ ຮຽບຮຽງປຶ້ມເຫລັ້ມນີ້ຍັງພົບຄວາມຫຍຸ້ງຍາກຢູ່ຫລາຍຢ່າງອັນເນື່ອງມາຈາກການຂາດເຂີນເອກະສານຂໍ້ມູນ, ຂາດບົດຮຽນຕົວຈິງໃນການຄົ້ນຄວ້າຮຽບຮຽງ, ທັງກຳນົດເວລາກະກຽມ, ຂຽນ ແລະ ກວດຄືນກໍຈຳກັດ ແລະ ຮີບດ່ວນທີ່ສຸດ. ສະນັ້ນ ປຶ້ມ " ວັນນະຄະດີລາວ " ເຫລັ້ມນີ້ຈຶ່ງບໍ່ອາດປາສະຈາກ ຂໍ້ຂາດຕົກບົກພ່ອງບາງປະການໄດ້ໃນດ້ານເນື້ອໃນກໍຄືດ້ານຮູບການ. ສະຖາບັນຄົ້ນຄວ້າວິທະຍາສາດ - ສັງຄົມ ຈຶ່ງຈິງໃຈຂໍຮ້ອງມາຍັງຜູ້ອ່ານທັງ ຫລາຍ ຈົ່ງໄດ້ກະລຸນາໃຫ້ຄວາມຮ່ວມມືປະກອບຄຳຄິດຄຳເຫັນຕິຊົມ " ປຶ້ມວັນນະຄະດີລາວ " ເຫລັ້ມນີ້ດ້ວຍ ໂດຍສົ່ງຄຳເຫັນຕິຊົມຕ່າງໆ ໄປຍັງ ພະແນກວັນນະຄະດີ ພາສາສາດ ສະຖາບັນຄົ້ນຄວ້າວິທະຍາສາດ - ສັງຄົມ, ກະຊວງສຶກສາແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ວຽງຈັນ.

ຈຶ່ງຂໍຝາກຄວາມຂອບໃຈລ່ວງໜ້າມາຍັງທ່ານຜູ້ອ່ານທັງຫລາຍພ້ອມນີ້ດ້ວຍ.

ວຽງຈັນ, ພຶດສະພາ 1987.

ສະຖາບັນຄົ້ນວິທະຍາສາດ - ສັງຄົມ.

## ສາລະບານ

ບົດ ໜ້າ

ຄຳນຳ.................................................. ກ

ວັນນະຄະດີພື້ນເມືອງ................... ..........1 - 21

**ພາກທີ I: ວັນນະຄະດີພື້ນເມືອງຂອງບັນດາຊົນເຜົ່າໂດຍສັງເຂບ**

ກ. ບັນດາເຜົ່າທີ່ປະກອບເປັນຊາດລາວ.................... 22 - 29

ຂ. ວັນນະຄະດີພື້ນເມືອງຂອງບັນດາເຜົ່າໂດຍສັງເຂບ 30 - 38

**ພາກທີ II: ວັນນະຄະດີພື້ນເມືອງປະເພດຄຳລີລິດ**

I. ເທບນິຍາຍ.................................................... 43 - 74

II. ພື້ນສິບ......................................................... 75 - 84

III. ເນື້ອໃນຂອງພື້ນສິບລາວ..................................... 84 - 94

IV. ນິທານອັດສະຈັນ............................................ 94 - 113

V. ນິທານຊອນຫົວ.............................................. 114 - 127

VI. ນິທານສັດ.................................................... 128 - 145

**ພາກທີ III: ວັນນະຄະດີພື້ນເມືອງປະເພດຄຳກອນ**

I. ຄຳໂສກ........................................................ 146 - 155

II. ຄຳໂອມ........................................................ 155 - 175

III. ຄຳທວາຍ..................................................... 176 - 190

IV. ສຸພາສິດ....................................................... 191 - 226

V. ຄຳຜະຫຍາ.................................................... 226 - 243

VI. ຂັບ, ລຳແລະເຊີ້ງ.......................................... 243 - 274

**ພາກທີ IV : ການສະແດງພື້ນເມືອງ**

ກ. ລຳເລື່ອງ........................................................278 - 281

ຂ. ເນື້ອໃນແລະຮູບການສິລະປະຂອງລຳເລື່ອງ....... 281 - 284

ຄ. ລະຄອນກ້ອມ.............................................284 - 290

**ພາກທີສອງ : ວັນນະຄະດີຊຽນສະໄໝອານາຈັກລາວລ້ານຊ້າງ**

**ພາກທີ V : ສະພາບປະຫວັດສາດ ແລະ ວັນນະຄະດີສະໄໝອານາຈັກລາວລ້ານຊ້າງ**

ກ. ສະພາບປະຫວັດສາດສະໄໝອານາຈັກລາວລ້ານຊ້າງໂດຍສັງເຂບ ........................................................291 - 299

ຂ. ສະພາບການກຳເນີດ ແລະ ຂະຫຍາຍຕົວຂອງວັນນະຄະດີຊຽນສະໄໝອານາຈັກລາວລ້ານຊ້າງໂດຍສັງເຂບ..300 - 329

**ພາກທີ VI : ວັນນະຄະດີຊຽນສະໄໝອານາຈັກລາວລ້ານຊ້າງຈະເລີນຮຸ່ງເຮືອງ**

I. ວັນນະຄະດີປະຫວັດສາດ.....................................333 - 344

II. ວັນນະຄະດີສັນລະເສີນສາສະໜາພຸດ.............. 345 - 367

III. ວັນນະຄະດີຄຳສອນ......................................... 367 - 389

IV. ກະວີນິຍາຍ.....................................................389 - 458

**ພາກທີ VII: ວັນນະຄະດີຊຽນສະໄໝອານາຈັກລາວລ້ານຊ້າງຊຸດໂຊມ ແລະ ເສຍເອກະລາດ ( ແຕ່ທ້າຍສະຕະວັດທີ XVIII ເຖິງທ້າຍສະຕະວັດທີ XIX)**

ກ. ສະພາບປະຫວັດສາດສະໄໝອານາຈັກລາວລ້ານຊ້າງຊຸດ
ໂຊມ ແລະ ເສຍເອກະລາດ....................................459 - 462
ຂ. ການຂະຫຍາຍຕົວຂອງວັນນະຄະດີ..................462 - 465
- ເລື່ອງ : " ສານລຶບພະສູນ "...............................465 - 472
- ເລື່ອງ: " ກາບເມືອງພວນ "...............................473 - 479
- ເລື່ອງ: " ພື້ນວຽງ ".......................................479 - 496
**ຕອນທີສາມ: ວັນນະຄະດີທັນສະໄໝ**
**ພາກທີ VIII: ວັນນະຄະດີລາວ ( ແຕ່ປີ 1893 - 1954 )**
ກ. ສະພາບປະຫວັດສາດ.......................................496 - 500
ຂ. ສະພາບການຂະຫຍາຍຕົວຂອງວັນນະຄະດີ.....500 - 555
**ພາກທີ IX: ວັນນະຄະດີເຂດສັດຕູຄວບຄຸມຊົ່ວຄາວ**
**( 1955-1975 )**
ກ. ສະພາບປະຫວັດສາດ ແລະ ຄວາມເປັນຈິງ ໃນເຂດສັດຕູຄວບ
ຄຸມຊົ່ວຄາວ.......................................................556 - 562
ຂ. ສະພາບວັນນະຄະດີໃນເຂດສັດຕູຄວບຄຸມຊົ່ວຄາວ 562 - 583
**ພາກທີ X : ວັນນະຄະດີປະຕິວັດ**
ກ. ເງື່ອນໄຂການກຳເນີດ ແລະ ຂະຫຍາຍຕົວຂອງວັນນະຄະດີປະ
ຕິວັດລາວ........................................................583 - 603
ຂ. ວັນນະຄະດີປະຕິວັດປະເພດກາບກອນ............603 - 663
ຄ. ວັນນະຄະດີປະຕິວັດປະເພດຄຳລີລິດ.............664 - 774

## ພາກທີ XI : ວັນນະຄະດີລາວ ( ແຕ່ປີ 1976 - 1985 )

ກ. ສະພາບປະຫວັດສາດ.........................................775 - 778

ຂ. ສະພາບການຂະຫຍາຍຕົວຂອງວັນນະຄະດີ....... 778 - 793

ຄ. ລັກສະນະຂອງວັນນະຄະດີໄລຍະນີ້ ( 1976 - 1985 ) 794-869

ສະຫລຸບລວມ................................................. 870 - 884

ບັນນານຸກົມ.................................................... 885 - 915

# ອະລຳພະບົດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕັ້ງຢູ່ໃຈກາງຂອງ ແຫລມ ອິນດູຈີນ ຊຶ່ງເປັນດິນແດນອັນສວຍສົດງົດງາມ ແລະ ອຸດົມຮັ່ງມີມາ ແຕ່ບູຮານນະການ, ຈົນແຕ່ກ່ອນເຄີຍມີຊື່ວ່າ: " ສຸວັນນະພູມປະເທດ " ອັນ ແປວ່າດິນແດນຄຳ. ເຂດແດນປະເທດລາວ ໃນເສັ້ນຊາຍແດນປັດຈຸບັນນີ້ ຢູ່ລະຫວ່າງເສັ້ນຂະໜານທີ 13 ຫາ 23 ທາງພາກເໜືອຂອງພິພົບ, ມີເນື້ອ ທີ່ກວ້າງປະມານ 236.800 ຕະລາງກິໂລແມັດ, ເປັນພາກສ່ວນໜຶ່ງຂອງ ອານາຈັກລາວລ້ານຊ້າງອັນກວ້າງໃຫຍ່ໄພສານ ທີ່ຄົງຕົວຢູ່ຢ່າງລືຊາຜາ ກິດແຕ່ກາງສະຕະວັດທີ XIV ຫາຕົ້ນສະຕະວັດທີ XVIII.

ຄວາມສວຍງາມ ແລະ ຮັ່ງມີຂອງທຳມະຊາດເມືອງລາວ ແມ່ນ ຄວາມເອກອ້າງທະນົງໃຈອັນໜຶ່ງຂອງປວງຊົນລາວທັງຊາດ, ທັງເປັນສິ່ງ ປຸກລຸກກະຕຸກໃຈຂອງນັກສິລະປະຈິດຕະກອນລາວທັງຫລາຍຈົນກາຍ ເປັນຫົວເລື່ອງ ແລະ ເນື້ອໃນຕະຫລອດເຖິງຮູບແບບຂອງບົດຟ້ອນ, ກອນ ລຳ ແລະ ວັນນະກຳລາວປະເພດຕ່າງໆ ທີ່ດີເດັ່ນ ແລະ ລືຊື່ຕັ້ງຫລາຍ ບົດ, ຫລາຍເລື່ອງ. ພູຜາປ່າໄມ້ອັນຂຽວງາມ ແລະ ອຸດົມຮັ່ງມີ ຊຶ່ງກວມເຖິງກວ່າ ສອງສ່ວນສາມ ຂອງດິນແດນທົ່ວປະເທດນັ້ນ ໄດ້ກາຍເປັນແຫລ່ງກຳ ເນີດໃຫ້ແກ່ກອນລຳເດີນດົງ ອັນຊື່ນບານທ້າວທັນເປັນທີ່ໜ້າຈັບໃຈ ແລະ ນິຍົມຊົມຊອບໃນໝູ່ປະຊາຊົນຄົນລາວທົ່ວປະເທດ. ແມ່ນ້ຳລູເຊທີ່ໄຫລ ລ່ອງຢ່າງງຽບສະຫງົບເປັນເໝືອນດັ່ງຕາໜ່າງຄອງເໜືອງທຳມະຊາດຢູ່ດິນ ແດນລາວ ຊຶ່ງສ່ວນຫລາຍໄຫລໄປໂຮມໃສ່ແມ່ນ້ຳຂອງອັນເປັນລຳນ້ຳໃຫຍ່ ກວ່າໝູ່ຈົນໄດ້ໃສ່ຊື່ວ່າ: " ແມ່ນ້ຳຂອງ " ນັ້ນກໍ່ສະໜິດຕິດພັນກັບສຽງຂັບ

ລຳຕ່າງໆທີ່ໜ້າອອນຊອນໃຈເຊັ່ນ: ລຳລ່ອງຂອງ, ຂັບງື່ມ, ລຳຄອນສະຫວັນ ແລະ ອື່ນໆ... ທ້ອງຖິ່ນດິນນາ ແລະ ເຂດແຄ້ວນຕ່າງໆ ແຕ່ລະບ່ອນຕ່າງກໍມີລັກສະນະພິເສດຂອງຕົນ, ມີຄວາມສວຍງາມ ແລະ ຮັ່ງມີສະເພາະຂອງທ້ອງຖິ່ນອີກດ້ວຍ. ຢູ່ທາງພາກເໜືອມີຈ້ອຍລື້, ຢູ່ຫົວພັນມີຂັບຊຳເໜືອ, ຢູ່ຊຽງຂວາງ ມີຂັບພວນ ( ຫລື ຂັບຊຽງຂວາງ ), ຢູ່ຫລວງພະບາງ ມີຂັບທຸ້ມ, ຢູ່ວຽງຈັນມີຂັບງື່ມ, ລຳ ລ່ອງ, ລຳເຕີ້ຍ, ຢູ່ຄຳມ່ວນມີລຳມະຫາໄຊ, ຢູ່ສະຫວັນນະເຂດ ມີລຳຄອນສະຫວັນ, ຕັ່ງຫວາຍ ແລະ ຢູ່ຈຳປາສັກມີລຳສີພັນດອນ ແລະ ອື່ນໆ... ນອກຈາກນັ້ນຍັງມີລຳຜູ້ໄທ, ຂັບເຕີ່ມ (ລາວເທີງ) ຂັບລາວສູງ ແລະ ອື່ນໆ ອີກ.

ພົນລະເມືອງລາວປັດຈຸບັນນີ້ມີ 3. 584.803 ( ສາມລ້ານຫ້າແສນແປດໝື່ນສີ່ພັນແປດຮ້ອຍສາມຄົນ). ( 137, 1 )* ຊຶ່ງປະກອບດ້ວຍຫລາຍເຜົ່າທີ່ອາດຈັດລວມເຂົ້າເປັນທົກໝວດ ໂດຍອີງຕາມລັກສະນະສະເພາະໃນດ້ານພາສາ, ວັດທະນະທຳ ແລະ ຮູບແບບການຜະລິດ ມູນເຊື້ອຄື: ໝວດເຜົ່າ ທີ່ປາກພາສາໄທລາວອັນປະກອບດ້ວຍເຜົ່າລາວ, ໄທດຳ, ໄທແດງ, ໄທລື້, ໄທພວນ, ໄທແຊກ, ໄທເມີ້ຍ ແລະ ອື່ນໆ; ໝວດທີ່ປາກພາສາມອນ - ຂະແມອັນປະກອບດ້ວຍເຜົ່າກຳມຸ, ລະເມດ, ລະເວນ, ລະແວ, ສ່ວຍ, ມັງກອງ ແລະ ອື່ນໆ; ໝວດທີ່ປາກພາສາມົ້ງຢ້າວປະກອບດ້ວຍເຜົ່າມົ້ງຂາວ, ມົ້ງດຳ, ມົ້ງລາຍ, ແລນແຕນ, ອາຂ່າ, ປີລູ ແລະ ອື່ນໆ. ໝວດທີ່ປາກ ພາສາພະມ້າ - ຕີເບດ ອັນປະກອບດ້ວຍເຜົ່າກໍ້, ກຸຍ, ໂລໂລ, ພູນ້ອຍ, ມູເຊີ ແລະ ອື່ນໆ; ໝວດທີ່ປາກພາສາຫວຽດເມື່ອງ ອັນປະກອບດ້ວຍ

( * ) ໃນເລກໝາຍເຫດນີ້ ຕົວເລກທຳອິດແມ່ນຕົວເລກລຳດັບຂອງເອກະສານທີ່ຈັດລຽງໃນບັນນານຸກົມ, ສ່ວນເລກໂລແມັງ ( ຖ້າມີ ) ແມ່ນເລກໝາຍເຫລັ້ມ ແລະ ຕົວເລກສຸດທ້າຍ ແມ່ນໜ້າເອກະສານ.

24/VII

ເຜົ່າເມືອງ, ສະລາງ, ຕູ໊ ແລະ ອື່ນໆ; ໝວດທີ່ປາກພາສາຫໍ້ ຊຶ່ງມາເຖິງປັດຈຸບັນເຫັນມີ ແຕ່ເຜົ່າຫໍ້ເຜົ່າດຽວ.

ທຸກໆ ເຜົ່າທີ່ກ່າວມານັ້ນໄດ້ເຕົ້າໂຮມເຂົ້າກັນເປັນປະຊາຊົນລາວອັນໜຶ່ງອັນດຽວ ແລະ ເຖິງວ່າແຕ່ລະເຜົ່າຕ່າງກໍມີຈຸດພິເສດສະເພາະຂອງຕົນ, ແຕ່ພ້ອມກັນນັ້ນກໍມີລັກສະນະພື້ນຖານລວມຄື: ໃຊ້ພາສາໄທລາວເປັນພາສາກາງ, ນຳເອົາວັດທະນະທຳຂອງທຸກໆ ເຜົ່າມາລວມເຂົ້າກັນເປັນວັດທະນະທຳລວມອັນອຸດົມຮັ່ງມີຂອງໝົດທັງຊາດລາວ ໂດຍມີວັດທະນະທຳໄທ ລາວເປັນແກ່ນສານ ແລະ ບໍ່ວ່າຈະຢູ່ພູສູງ, ພູພຽງ ຫລື ທົ່ງພຽງກໍລ້ວນແຕ່ ຢູ່ຮ່ວມກັນນີ້ນດິນແດນລາວນີ້ ໂດຍມີການພົວພັນແລກປ່ຽນດ້ານເສດຖະກິດນຳກັນຢ່າງເປັນປະຈຳຕະຫລອດມາ. ຊາວລາວທຸກເຜົ່າລ້ວນແຕ່ມີນ້ຳ ໃຈຮັກບ້ານເກີດເມືອງນອນດິນດອນຕອນຫຍ້າລາວນີ້, ມີຈິດໃຈກວ້າງ ຂວາງຮັກແພງເພື່ອແຜ່ຊ່ວຍເຫລືອເຊິ່ງກັນ ແລະ ກັນ, ມີນ້ຳໃຈຮັກການອອກ ແຮງງານຢ່າງຂະຫຍັນຂັນແຂງ, ຮັກຫອມສັນຕິພາບ, ຮັກຄວາມເປັນທຳ, ເດັດດ່ຽວບໍ່ຍອມຈຳນົນໃນການຕໍ່ສູ້ຕ້ານການກົດຂີ່ຂູດຮີດ ແລະ ການຮຸກຮານທຳລາຍຈາກສັດຕູພາຍໃນ ແລະ ພາຍນອກ. ເພາະສະນັ້ນ ປວງຊົນ ລາວບັນດາເຜົ່າຈຶ່ງສາມັກຄີປອງດອງເຕົ້າໂຮມກັນເຂົ້າຢ່າງໜ້າມະຫັດສະຈັນເປັນຊາດລາວເອກະພາບຊຶ່ງເປັນ " ຊາດໜຶ່ງທີ່ມີປະຫວັດສາດອັນສະຫງ່າງາມ ແຫ່ງການກໍ່ຕັ້ງປະເທດ ແລະ ປົກປັກຮັກສາປະເທດເປັນພັນໆ ປີມາແລ້ວ " ( 12, 6 ). ໂດຍສະເພາະຢ່າງຍິ່ງ ນັບແຕ່ສະໄໝເຈົ້າຟ້າງຸ່ມທ້ອນໂຮມປະເທດຊາດເຂົ້າເປັນອານາຈັກລາວລ້ານຊ້າງເອກະພາບຄັ້ງທຳອິດໃນປະຫວັດສາດເມື່ອປີ 1353 ເປັນຕົ້ນມາ, ປວງຊົນລາວທັງຊາດໄດ້ພ້ອມພຽງກັນສ້າງສາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ